ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*************

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 0163 /ກປ.04

07 JUN 2004

ນະຄອນຫລວງ ວຽງຈັນ, ວັນທີ......................

# ຂໍ້ຕົກລົງ

## ຂອງ ລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ວ່າດ້ວຍ ໄມ້ເລື່ອຍ, ໄມ້ເຄິ່ງສຳເລັດຮູບ ແລະ ໄມ້ສຳເລັດຮູບ

- ອີງຕາມ ມາດຕາ 60 ຂອງ ກົດໝາຍປ່າໄມ້ ສະບັບເລກທີ 01-96, ລົງວັນທີ 11/10/1996 ກ່ຽວກັບ ສິດ ແລະ ໜ້າທີ່ ຂອງ ກະຊວງ ກະສິກຳ ແລະ ປ່າໄມ້.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 505/ຫສນຍ.ລຂ, ລົງວັນທີ 06/04/2004 ກ່ຽວກັບ ບົດລາຍງານ ສະພາບການຈັດຕັ້ງປະຕິບັດ ການຂຸດຄົ້ນໄມ້ ແລະ ຊື້ - ຂາຍໄມ້ ໃນ 6 ເດືອນ ຕົ້ນປີ ແລະ ບາງບາດກ້າວ ແກ້ໄຂ ບັນຫາ ການຂຸດຄົ້ນໄມ້ ແລະ ຊື້ - ຂາຍ ໄມ້ ໃນ 6 ເດືອນ ທ້າຍປີ 2003 - 2004.
- ອີງຕາມ ລະບຽບການ ຂອງ ກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 0261/ກປ.2000, ລົງວັນທີ 30/11/2000 ວ່າດ້ວຍ ການຄຸ້ມຄອງ ໂຮງງານ ປຸງແຕ່ງໄມ້ ແລະ ຜະລິດຕະພັນປ່າໄມ້.

ລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ :

## ໝວດທີ I

## ຫລັກການລວມ

ມາດຕາ 1. ຈຸດປະສົງ.

- ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ ຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ເຮັດໃຫ້ ການນຳໃຊ້ໄມ້ ເກີດຜົນປະໂຫຍດ ສູງສຸດ ດ້ວຍ ການສ້າງມູນຄ່າເພີ່ມ ຈາກ ການປຸງແຕ່ງໄມ້ ເປັນໄມ້ເຄິ່ງສຳເລັດຮູບ ແລະ ໄມ້ສຳເລັດຮູບ.

ຄ. ໄມ້ເລື່ອຍຂະໜາດນ້ອຍ

- ຄວາມໜາ 01 - 03 ຊມ.
- ຄວາມກວ້າງ ບໍ່ຈຳກັດ.
- ຄວາມຍາວ ຕາມ ຂະໜາດຂອງໄມ້ທ່ອນ.

3.2 ຂະບວນການ ປຸງແຕ່ງ ໄມ້ເລື່ອຍ

ໄມ້ເລື່ອຍ ທັງໝົດ ທີ່ໄດ້ກຳນົດໄວ້ ຢູ່ມາດຕາ 3 ຂ້າງເທິງນີ້ ຕ້ອງໄດ້ຜ່ານ ຂະບວນການ ປຸງແຕ່ງ ດ້ວຍ ການເລື່ອຍ ທັງສີ່ດ້ານ ໃຫ້ກາຍເປັນເສັ້ນ ຫລື ເປັນແຜ່ນ ຕາມ ຈຸດປະສົງ ຂອງ ການນຳໃຊ້. ແຕ່ສຳລັບ ໄມ້ໜ້າໂຕະ ບາງກໍລະນີ ກໍເລື່ອຍ ແຕ່ສອງດ້ານ ເທົ່ານັ້ນ.

ມາດຕາ 4. ຂະໜາດ ແລະ ຂະບວນການ ປຸງແຕ່ງໄມ້ ເຄິ່ງສຳເລັດຮູບ

4.1 ຂະໜາດຂອງໄມ້ເຄິ່ງສຳເລັດຮູບ.

ກ ເຄື່ອງໃຊ້ໃນເຮືອນ.

- ຂາໂຕະ, ຂາຕັ່ງ, ຄວາມໜາ ແລະ ຄວາມກວ້າງ ບໍ່ເກີນ 12 ຊມ ແລະ ຄວາມຍາວ ບໍ່ເກີນ 100 ຊມ;
- ໄມ້ຂາຕຽງ ຄວາມໜາ, ຄວາມກວ້າງ ບໍ່ເກີນ 12 ຊມ, ຄວາມຍາວ ບໍ່ເກີນ 50 ຊມ;
- ໄມ້ຂອບຕຽງ ຄວາມໜາ ບໍ່ເກີນ 03 ຊມ, ຄວາມກວ້າງ ບໍ່ເກີນ 40 ຊມ ແລະ ຄວາມຍາວ ບໍ່ເກີນ 300 ຊມ;
- ໄມ້ແປ້ນ ຂ້າງຕູ້ ຄວາມໜາ ບໍ່ເກີນ 03 ຊມ, ຄວາມກວ້າງ ແລະ ຄວາມຍາວ ບໍ່ຈຳກັດ;
- ໄມ້ໜ້າໂຕະ ແລະ ໄມ້ໜ້າຕັ່ງຄວາມໜາບໍ່ເກີນ 06 ຊມ, ຄວາມກວ້າງ ແລະ ຄວາມຍາວ ບໍ່ຈຳກັດ;

ຂ ໄມ້ເຄື່ອງເຮືອນ.

- ໄມ້ເສົາເຮືອນ ຂະໜາດ ຄວາມໜາ ແລະ ຄວາມກວ້າງ 15 ຊມ x 15 ຊມ, 18 ຊມ x 18 ຊມ ແລະ 20 ຊມ x 20 ຊມ; ຄວາມຍາວ ບໍ່ເກີນ 400 ຊມ;
- ໄມ້ແປ້ນປູ ທີ່ບໍ່ມີລີ້ນ ແລະ ຮ່ອງ ຂະໜາດຄວາມໜາ ບໍ່ເກີນ 03 ຊມ, ຄວາມກວ້າງ ບໍ່ເກີນ 30 ຊມ ແລະ ຄວາມຍາວບໍ່ຈຳກັດ;
- ໄມ້ແປ້ນແອ້ມ ທີ່ບໍ່ມີລີ້ນ ແລະ ຮ່ອງ ຂະໜາດ ຄວາມໜາ ບໍ່ເກີນ 2,5 ຊມ, ຄວາມກວ້າງ ບໍ່ເກີນ 30 ຊມ ແລະ ຄວາມຍາວ ບໍ່ຈຳກັດ.
- ແມ່ຂັ້ນໄດ ແລະ ລູກຂັ້ນໄດ ຄວາມໜາ ບໍ່ເກີນ 08 ຊມ, ຄວາມກວ້າງ ບໍ່ເກີນ 30 ຊມ ແລະ ຄວາມຍາວ ບໍ່ຈຳກັດ;

ຄ ໄມ້ເຄິ່ງສຳເລັດຮູບອື່ນໆ.

ໄມ້ເຄິ່ງສຳເລັດຮູບອື່ນໆ ປະກອບດ້ວຍ : ໄມ້ປອກ, ໄມ້ຝານ, ໄມ້ບິດ ແລະ ຝຸ່ນເຈັຍ. ສຳລັບ ໄມ້ເກດສະໜາ ບໍ່ອະນຸຍາດ ໃຫ້ນຳໄປຜະລິດ ເປັນ ໄມ້ປອກ, ໄມ້ຝານ, ໄມ້ບິດ ແລະ ຝຸ່ນເຈັຍ.

4.2 <u>ຂະບວນການ ປຸງແຕ່ງ ໄມ້ເຄິ່ງສຳເລັດຮູບ</u>.

ໄມ້ເຄິ່ງສຳເລັດຮູບ ຈຳນວນ ທັງໝົດ ທີ່ໄດ້ກຳນົດໄວ້ ຢູ່ ມາດຕາ 4 ຂ້າງເທິງນີ້ ຕ້ອງໄດ້ຜ່ານ ຂະບວນການ ປຸງແຕ່ງ ຄື :

1. ເລື່ອຍທັງສີ່ດ້ານ ໃຫ້ກາຍເປັນເສັ້ນ ຫລື ເປັນແຜ່ນ ຕາມ ຈຸດປະສົງ ຂອງ ການນຳໃຊ້. ແຕ່ສຳລັບ ໄມ້ໜ້າໂຕະ ບາງກໍລະນີ ກໍເລື່ອຍແຕ່ ສອງດ້ານ ເທົ່ານັ້ນ.
2. ອົບແຫ້ງ ໃຫ້ໄດ້ ຕາມ ມາດຕະຖານ.
3. ບາງກໍລະນີ ມີການຊອຍຕື່ມ ເພື່ອໃຫ້ໄດ້ ຕາມ ຂະໜາດຄວາມໜາ ແລະ ຄວາມກວ້າງ ທີ່ຕ້ອງການ ຂອງຕະຫຼາດ.
4. ຕັດໃຫ້ໄດ້ ຕາມ ຂະໜາດ ຄວາມຍາວ ທີ່ຕ້ອງການ ຂອງຕະຫຼາດ.
5. ການກົບ.
6. ການມັດ ໃຫ້ຖືກ ຕາມຄວາມຕ້ອງການ ຂອງຕະຫຼາດ.

ມາດຕາ 5. ຂະໜາດ ແລະ ຂະບວນການ ປຸງແຕ່ງໄມ້ ສຳເລັດຮູບ

5.1 <u>ຂະໜາດຂອງໄມ້ສຳເລັດຮູບ.</u>

5.1.1 <u>ໄມ້ປູພື້ນ.</u>

- <u>ໄມ້ປູພື້ນແບບມີລີ້ນ ແລະ ຮ່ອງ</u> : ໄມ້ປູພື້ນ ຊະນິດນີ້ ທາງສັ້ນທິວ ເບື້ອງໜຶ່ງ ມີຮ່ອງ ແລະ ອີກເບື້ອງໜຶ່ງ ມີລີ້ນ, ສ່ວນດ້ານຂ້າງນັ້ນ ຂ້າງໜຶ່ງ ມີລີ້ນ ແລະ ອີກຂ້າງໜຶ່ງ ມີຮ່ອງ. ຂະໜາດ ຄວາມໜາ ບໍ່ເກີນ 2,5 ຊມ, ສ່ວນຄວາມກວ້າງ ແລະ ຄວາມຍາວ ບໍ່ຈຳກັດ.
- <u>ໄມ້ປູພື້ນແບບໂມເສກ</u> : ແມ່ນແຜ່ນໄມ້ປູພື້ນ ຊຶ່ງປະກອບດ້ວຍ ໄມ້ປ່ຽງນ້ອຍໆ ເປັນຈຳນວນ ຫລາຍປ່ຽງ ທີ່ມີຂະໜາດ ຄວາມໜາ ຂອງແຕ່ລະແຜ່ນ ບໍ່ເກີນ 1,2 ຊມ ສ່ວນຄວາມກວ້າງ ແລະ ຄວາມຍາວ ຂອງ ແຕ່ລະແຜ່ນ ບໍ່ຈຳກັດ.

5.1.2 <u>ໄມ້ເຄື່ອງເຮືອນ.</u>

- ໄມ້ວົງປະຕູ ແລະ ວົງປ່ອງຢ້ຽມ ຄວາມໜາ ບໍ່ເກີນ 10 ຊມ, ຄວາມກວ້າງ ບໍ່ເກີນ 20 ຊມ ແລະ ຄວາມຍາວ ບໍ່ເກີນ 300 ຊມ;
- ບານປະຕູ ຄວາມກວ້າງ ບໍ່ເກີນ 180 ຊມ ແລະ ຄວາມຍາວ ບໍ່ເກີນ 300 ຊມ;
- ບານປ່ອງຢ້ຽມ ຄວາມກວ້າງ ບໍ່ເກີນ 120 ຊມ ແລະ ຄວາມຍາວ ບໍ່ເກີນ 200 ຊມ ( ສຳລັບ 1 ປ່ອງ );
- ລູກຕັ່ງ ໃຫຍ່ສຸດ ບໍ່ເກີນ 15 ຊມ x 15 ຊມ ແລະ ຄວາມຍາວ ບໍ່ເກີນ 200 ຊມ;
- ໄມ້ສາຍບົວ ( ໄມ້ມອບ ) ຄວາມໜາ ບໍ່ເກີນ 04 ຊມ, ຄວາມກວ້າງ ບໍ່ເກີນ 20 ຊມ ແລະ ຄວາມຍາວ ບໍ່ຈຳກັດ;
- ໄມ້ແປ້ນແອ້ມ ແບບມີລີ້ນ ແລະ ຮ່ອງປະສານ ຄວາມໜາ ບໍ່ເກີນ 03 ຊມ, ຄວາມກວ້າງ ບໍ່ເກີນ 30 ຊມ ແລະ ຄວາມຍາວ ບໍ່ຈຳກັດ;

- ໄມ້ແປ້ນປູ ແບບມີລິ້ນ ແລະ ຮ່ອງປະສານ ຄວາມໜາ ບໍ່ເກີນ 04 ຊມ, ຄວາມກວ້າງ ບໍ່ເກີນ 30 ຊມ ແລະ ຄວາມຍາວບໍ່ຈຳກັດ;
- ໄມ້ປ້ານລົມ ແລະ ປ້ານຊາຍ ຄວາມໜາ ບໍ່ເກີນ 03 ຊມ, ຄວາມກວ້າງ ບໍ່ເກີນ 30 ຊມ ແລະ ຄວາມຍາວບໍ່ຈຳກັດ;
- ຜະລິດຕະພັນໄມ້ ລາມິເນດ ( Laminate ) ທີ່ປະກອບເປັນ ຜະລິດຕະພັນ ເຄື່ອງຮັບໃຊ້ ໃນເຮືອນ; ໄມ້ເຄື່ອງ ກໍ່ສ້າງ ຂະໜາດໃຫຍ່ ແລະ ຂະໜາດນ້ອຍ ຊຶ່ງຄວາມໜາ, ຄວາມກວ້າງ ແລະ ຄວາມຍາວ ບໍ່ຈຳກັດ.

5.1.3 <u>ເຄື່ອງໃຊ້ໃນເຮືອນ</u>.

- ໂຕະ, ຕັ່ງ, ຕູ້, ຕຽງທີ່ປະກອບເຂົ້າກັນແລ້ວ ຫຼື ບໍ່ທັນໄດ້ປະກອບ ແຕ່ຕ້ອງມີສິ້ນສ່ວນຄົບຊຸດ.

5.1.4 <u>ໄມ້ອັດ</u>.

ຄວາມໜາ, ຄວາມກວ້າງ ແລະ ຄວາມຍາວ ບໍ່ຈຳກັດ ອີງໃສ່ ຄວາມຕ້ອງການຂອງຕະຫຼາດ.

5.2 <u>ຂະບວນການ ປຸງແຕ່ງ ໄມ້ສຳເລັດຮູບ</u>.

ໄມ້ສຳເລັດຮູບ ຈຳນວນ ທັງໝົດ ທີ່ກຳນົດໄວ້ຢູ່ ມາດຕາ 5 ນີ້ ຕ້ອງໄດ້ຜ່ານ ຂະບວນການ ປຸງແຕ່ງ ຄື :

1. ເລື່ອຍທັງສີ່ດ້ານ ໃຫ້ກາຍເປັນ ເສັ້ນ ຫລື ເປັນແຜ່ນ, ແຕ່ບາງຊະນິດ ໄມ້ສຳເລັດຮູບ ຕ້ອງໄດ້ປອກ ຫລື ຝານໃຫ້ເປັນແຜ່ນ ຕາມ ຈຸດປະສົງ ຂອງ ການນຳໃຊ້. ແຕ່ສຳລັບ ໄມ້ໜ້າໂຕະ ບາງກໍລະນີ ກໍເລື່ອຍແຕ່ ສອງດ້ານ ເທົ່ານັ້ນ.
2. ອົບແຫ້ງ ໃຫ້ໄດ້ ຕາມ ມາດຕະຖານ.
3. ບາງກໍລະນີ ມີການຊອຍຕື່ມ ເພື່ອໃຫ້ໄດ້ ຕາມຂະໜາດ ຄວາມໜາ ແລະ ຄວາມກວ້າງ ທີ່ຕ້ອງການ.
4. ຕັດໃຫ້ໄດ້ ຕາມ ຂະໜາດ ຄວາມຍາວ ທີ່ຕ້ອງການ.
5. ການກົບ.
6. ບາງຊະນິດ ມີການເຈາະຮູ, ເຮັດລິ້ນ, ແລ່ນຮ່ອງ ແລະ ຕິດກາວ.
7. ການຂັດ.
8. ບາງ ຊະນິດມີການປະກອບເຂົ້າກັນ ແລ້ວທາສີ.

## <u>ໝວດທີ III</u>

## ນະໂຍບາຍ ສົ່ງເສີມ ການສົ່ງອອກ

ມາດຕາ 6. ນະໂຍບາຍ.

6.1 ລັດມີ ນະໂຍບາຍ ສົ່ງເສີມ ໃຫ້ຜູ້ທີ່ໄດ້ຮັບອະນຸຍາດ ດຳເນີນ ທຸລະກິດໄມ້ ນຳໃຊ້ໄມ້ ເພື່ອ ປຸງແຕ່ງເປັນ ໄມ້ເຄິ່ງສຳເລັດຮູບ ແລະ ໄມ້ສຳເລັດຮູບ ເພື່ອສົ່ງອອກ ຕ່າງປະເທດ ຄື :

- ໄມ້ເຄື່ອງສຳເລັດຮູບ ທຸກຊະນິດ ທີ່ໄດ້ກຳນົດໄວ້ ຢູ່ ມາດຕາ 4.
- ໄມ້ສຳເລັດຮູບ ທຸກຊະນິດ ທີ່ໄດ້ກຳນົດໄວ້ ຢູ່ ມາດຕາ 5.

6.2.ຜູ້ໄດ້ຮັບອະນຸຍາດ ດຳເນີນ ທຸລະກິດໄມ້ ທີ່ມີຄວາມຕ້ອງການ ປຸງແຕ່ງ ແລະ ສົ່ງໄມ້ອອກຕ່າງປະເທດ ທີ່ບໍ່ຖືກຕາມ ຂະໜາດ ແລະ ຊະນິດ ທີ່ບໍ່ໄດ້ກຳນົດໄວ້ ຢູ່ໃນ ມາດຕາ 4 ແລະ ມາດຕາ 5 ຕ້ອງໄດ້ຮັບ ອະນຸຍາດ ຈາກ ລັດຖະບານ ໂດຍ ການນຳສະເໜີ ຂອງ ກະຊວງ ກະສິກຳ ແລະ ປ່າໄມ້ ຈຶ່ງດຳເນີນການໄດ້.

## ໝວດທີ IV
## ບົດບັນຍັດ ສຸດທ້າຍ

**ມາດຕາ 7. ການຈັດຕັ້ງປະຕິບັດ.**

ມອບໃຫ້ ກົມປ່າໄມ້; ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ ວຽງຈັນ ແລະ ເຂດພິເສດ ສົມທົບກັບ ພາກສ່ວນ ກ່ຽວຂ້ອງ ແລະ ອຳນາດ ການປົກຄອງ ທ້ອງຖິ່ນ ຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 8. ຜົນສັກສິດ.**

ຂໍ້ຕົກລົງ ສະບັບນີ້ ໃຊ້ປ່ຽນແທນ ຂໍ້ຕົກລົງ ສະບັບເລກທີ 0414/ກປ, ລົງວັນທີ 12/05/1995 ວ່າດ້ວຍ ມາດຖານ ຜະລິດຕະພັນໄມ້, ໄມ້ປ່ອງ ແລະ ຫວາຍ ແລະ ມີຜົນ ນຳໃຊ້ໄດ້ນັບແຕ່ມື້ ລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້

ສົ່ງນ ສະພັງທອງ